ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=========000=========

ກະຊວງກະສິກຳ ແລະ ປ່າໄມ້

0068
ເລກທີ .........../ກປ

ນະຄອນຫຼວງວຽງຈັນ, ວັນທີ 15 JUN 2009

ເຖິງ: ທ່ານຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ແລະນະຄອນຫຼວງ.

ເລື່ອງ: ການຈັດຕັ້ງປະຕິບັດເນື້ອໃນແຈ້ງການຂອງ ຄະນະເລຂາທິການລັດຖະບານສະບັບເລກທີ 887/ຄລບ ລົງວັນທີ 29/05/2009.

- ອີງຕາມ ແຈ້ງການຂອງ ຄະນະເລຂາທິການລັດຖະບານ ສະບັບເລກທີ 887/ຄລບ ລົງວັນທີ 29/05/2009.

ເພື່ອປະຕິບັດຕາມເນື້ອໃນຈິດໃຈທີ່ກ່າວມາຂ້າງເທິງ ລັດຖະມົນຕີວ່າການ ກະຊວງ ກະສິກະ ແລະ ປ່າໄມ້ ຈຶ່ງໄດ້ແຈ້ງ ໃຫ້ຈັດຕັ້ງປະຕິບັດດັ່ງນີ້:

1. ໃຫ້ຂະແໜງປ່າໄມ້ແຂວງ ແລະ ນະຄອນຫຼວງ ເອົາໃຈໃສ່ເຜີຍແຜ່ຂະຫຍາຍເນື້ອໃນແຈ້ງການຂອງ ຄະນະເລຂາທິການລັດຖະ ບານ ສະບັບເລກທີ 887/ຄລບ ລົງວັນທີ 29/05/2009 ກໍ່ຄື ດຳລັດຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 59 / ນຍລົງວັນທີ 02/ 05 /2003 ແລະ ລະບຽບການຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0204 / ກປ ລົງວັນທີ 03/02/2003, ວ່າດ້ວຍການຈັດຕັ້ງ ແລະ ການຄຸ້ມຄອງປ່າຜະລິດແບບຍືນນານ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ພໍ່ແມ່ປະຊາຊົນ ຕະຫຼອດຮອດນັກທຸລະກິດ ພໍ່ຄ້າຊາວຂາຍ ໃຫ້ມີຄວາມເຂົ້າໃຈຢ່າງທົ່ວເຖິງ ແລະ ພ້ອມກັນປະຕິບັດຢ່າງເຂັ້ມງວດ.
2. ໃຫ້ຊີ້ນຳຂະແໜງປ່າໄມ້ ແຕ່ງຕັ້ງວິຊາການລົງສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອຳນາດການປົກ ຄອງທ້ອງຖິ່ນຂຶ້ນແຜນ ແລະ ດຳເນີນການສຳຫຼວດຈັດສັນປ່າຜະລິດທີ່ມີສ່ວນຮ່ວມຂອງປະຊາຊົນຢູ່ໃນແຂວງ ຂອງ ຕົນ ໃຫ້ສຳເລັດໃນປີ 2010.
3. ເຂດປ່າຜະລິດໃດ ທີ່ໄດ້ມີແຜນຈັດສັນເປັນທີ່ຮຽບຮ້ອຍແລ້ວ ແມ່ນໃຫ້ສືບຕໍ່ຄຸ້ມຄອງ ແລະ ພັດທະນານຳໃຊ້ໃຫ້ໄປຕາມລະບົບ ການຈັດສັນແບບຍືນນານ ແລະຊີ້ນຳຂະແໜງການປ່າໄມ້ ສົ່ງວິຊາການລົງສຳຫຼວດ ກ່ອນການຂຸດຄົ້ນ ເພື່ອສະເໜີຂໍອະນຸມັດຕົວເລກຂຸດຄົ້ນໄມ້ປະຈຳປີ ນຳລັດຖະບານ ແລະ ຫ້າມເຂົ້າໄປບຸກລຸກແບບຊະຊາຍຢ່າງເດັດຂາດ.
4. ເຂດປ່າຜະລິດໃດ ທີ່ໄດ້ມີການຮ່ວມມືກັບສາກົນ, ໂດຍສະເພາະ ແມ່ນເຂດປ່າຜະລິດ ທີ່ມີການຮ່ວມມືກັບ ທະນາຄານໂລກ ແລະ ລັດຖະບານແຟງລັງນັ້ນ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳໂດຍໄວ.ຫ້າມເດັດ

ຂາດ ບໍ່ໃຫ້ເຂົ້າໄປຂຸດຄົ້ນໄມ້ ກ່ອນມີການຈັດສັນ ຫຼືເຂົ້າໄປບຸກລຸກ ຈັບຈອງ ເອົາດິນ ເພື່ອປູກໄມ້ ຫຼືເພື່ອຂາຍ ແລະເຮັດກິດຈະການອື່ນໆໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງກັບລະບຽບກົດໝາຍ ເຊັ່ນ:ການບຸກ ລຸກ ເຂົ້າໄປຖາງປ່າເຮັດໄຮ່ແບບເລື່ອນລອຍ, ການຕັດໄມ້ເພື່ອລໍຖ້າໂກຕາດັ່ງນີ້ເປັນຕົ້ນ.

5. ເຂດປ່າຜະລິດ ທີ່ບໍ່ມີການຮ່ວມມືກັບສາກົນຫຼືບໍ່ມີທຶນໃນການສໍາຫຼວດວາງແຜນ ຈັດສັນນັ້ນໃຫ້ ຂັ້ນຈໍາຂະ ແໜງ ປ່າໄມ້ຂອງຕົນຂຶ້ນແຜນ ນໍາໃຊ້ງົບປະມານຈາກກອງທຶນພັດທະນາປ່າໄມ້ເພື່ອຈັດຕັ້ງປະຕິບັດ ແລະ ການ ຄຸ້ມ ຄອງຕາມລະບົບໃຫ້ໄດ້ຮັບຜົນດີ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການ ກະຊວງ ກະສິກະ ແລະ ປ່າໄມ້

ສີຫາເຮັ່ງ ລາຊະພົນ

<u>ບ່ອນສົ່ງ:</u>

- ກົມປ່າໄມ້(ເພື່ອຊາບ ແລະ ຕິດຕາມ)
- ເກັບມ້ຽນ